# ບົດປະເມີນຜົນກະທົບ

## ດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ

### 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ

#### 1.1 ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ: ກະຊວງສຶກສາທິການ ແລະ ກິລາ

ຊື່ກົມ: ກົມກິດຈະການນັກສຶກສາ

ຊື່ ແລະ ຕຳແໜ່ງຂອງພະນັກງານທີ່ຮັບຜິດຊອບ:

- ທ່ານ ນາງ ທອງມີ ດວນສັກດາ, ຮອງຫົວໜ້າກົມກິດຈະການນັກສຶກສາ.
  ໂທ: 020 59359789
- ທ່ານ ເຂັມເພັດ ສາຍມະນີ, ຫົວໜ້າສູນບໍລິການນັກສຶກສາ.
  ໂທ: 020 22000186
  ອີເມລ: skhemphet@yahoo.com
  dsa.moes@yahoo.com

#### 1.2 ຊື່ຮ່າງນິຕິກຳ

ຊື່ຮ່າງດຳລັດ: ດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ.

ຮ່າງນິຕິກຳສະບັບ: ☑ ໃໝ່ ☐ ປັບປຸງ

#### 1.3 ກຳນົດເວລາ

ກຳນົດເວລາສ້າງນິຕິກຳໃຫ້ສຳເລັດໃນເດືອນ ມິຖຸນາ 2022 (ຕາມແຜນລັດຖະບານກຳນົດ)

#### 1.4 ຄວາມຄືບໜ້າ

ພາຍຫຼັງໄດ້ຮັບການມອບໝາຍຈາກຄະນະນຳກະຊວງໃຫ້ກົມກິດຈະການນັກສຶກສາສ້າງນິຕິກຳເພື່ອຄຸ້ມຄອງວຽກງານການສຶກສາຕ່າງປະເທດຢູ່ໃນມະຕິກອງປະຊຸມຄະນະນຳຜູ້ບໍລິຫານລັດລະດັບກະຊວງສຶກສາທິການ ແລະ ກິລາ ສະໄໝສາມັນປະຈຳເດືອນ ມີນາ 2019 ແລະ ມະຕິກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ທົ່ວປະເທດປະຈຳສົກປີ 2018-2019. ກົມກິດຈະການນັກສຶກສາຈຶ່ງໄດ້ຮີບຮ້ອນວາງແຜນ ເພື່ອດຳເນີນວຽກງານດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບໃນການສ້າງ ແລະ ປັບປຸງດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;
2. ເລີ່ມແຕ່ທ້າຍປີ 2019 ໄດ້ເລີ່ມສ້າງ ແລະ ປັບປຸງ ດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;

3. ໃນວັນທີ 24 ກຸມພາ 2020 ໄດ້ນໍາເອົາໂຄງປະກອບ ແລະ ຮ່າງເນື້ອໃນຂອງດໍາລັດ ທາບທາມ ແລະ ປະກອບຄໍາເຫັນຢູ່ໃນກອງປະຊຸມປະຈໍາປີ 2019 ຂອງກົມກິດຈະການນັກສຶກສາ ຈັດຂຶ້ນທີ່ຫ້ອງປະຊຸມ BTC, ບ້ານ ວຽງແກ້ວ, ເມືອງ ທຸລະຄົມ, ແຂວງ ວຽງຈັນ ມີຜູ້ແທນກອງປະຊຸມເຂົ້າຮ່ວມທັງໝົດ 95 ທ່ານ. ເຊິ່ງມາຈາກບັນດາກະຊວງທີ່ກ່ຽວຂ້ອງ, ບັນດາພະແນກສຶກສາທິການ ແລະ ກິລາ ແລະ ພະແນກການຕ່າງປະເທດ ແຂວງ, ນະຄອນຫຼວງ, ບັນດາກົມອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ ແລະ ສະຖານການສຶກສາທີ່ກ່ຽວຂ້ອງ;
4. ວັນທີ 4 ມີນາ 2020 ໄດ້ນໍາເອົາຮ່າງເນື້ອໃນດໍາລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ສະເໜີໃນກອງປະຊຸມປະຈໍາເດືອນ ຂອງຄະນະບໍລິຫານລັດ ລະດັບກະຊວງ;
5. ວັນທີ 4 ເມສາ 2020 ຈັດກອງປະຊຸມວິຊາການຂັ້ນກົມ ເພື່ອທົບທວນເນື້ອໃນດໍາລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;
6. ໃນວັນທີ 24 ເມສາ 2020 ໄດ້ຈັດກອງປະຊຸມວິຊາການຮ່ວມກັບຜູ້ຕາງໜ້າພະແນກນິຕິກໍາ, ກົມປະກັນຄຸນນະພາບການສຶກສາ, ກະຊວງສຶກສາທິການ ແລະ ກິລາ ເພື່ອທົບທວນໂຄງປະກອບຂອງດໍາລັດ;
7. ວັນທີ 7 ກໍລະກົດ 2020 ຈັດກອງປະຊຸມຂັ້ນກົມ ເພື່ອທົບທວນຮ່າງເນື້ອໃນດໍາລັດ ມີຜູ້ເຂົ້າຮ່ວມທັງໝົດ: 9 ທ່ານ ປະກອບມີຄະນະກົມ, ຄະນະພະແນກ/ສູນ ແລະ ພະນັກງານຈາກກົມປະກັນຄຸນນະພາບການສຶກສາ;
8. ວັນທີ 10 ກໍລະກົດ 2020 ຈັດກອງປະຊຸມເປີດກວ້າງ ເພື່ອຜ່ານໂຄງປະກອບ ແລະ ຮ່າງເນື້ອໃນຂອງດໍາລັດ ຊຶ່ງຈັດຂຶ້ນທີ່ ຫ້ອງປະຊຸມຊັ້ນ 3, ກະຊວງສຶກສາທິການ ແລະ ກິລາ ພາຍໃຕ້ການເປັນປະທານຂອງ ທ່ານ ຮສ ປອ ພຸດ ສິມມາລາວົງ, ຮອງລັດຖະມົນຕີກະຊວງ ສຶກສາທິການ ແລະ ກິລາ ມີຜູ້ແທນກອງປະຊຸມເຂົ້າຮ່ວມທັງມົດ 25 ທ່ານ, ເຊິ່ງມາຈາກບັນດາກະຊວງ ແລະ ກົມທີ່ກ່ຽວຂ້ອງພາຍໃນສໍານັກກະຊວງ ສຶກສາທິການ ແລະ ກິລາ;
9. ໃນລະຫວ່າງເດືອນ 3-4 ປີ 2021 ໄດ້ສົ່ງຮ່າງເນື້ອໃນຂອງດໍາລັດໃຫ້ບັນດາກົມທີ່ກ່ຽວຂ້ອງພາຍໃນກະຊວງສຶກສາທິການ ແລະ ກິລາ, ສະຖາບັນ ແລະ ມະຫາວິທະຍາໄລແຫ່ງຊາດ ເພື່ອປະກອບຄໍາເຫັນໃສ່ຮ່າງດັ່ງກ່າວ;
10. ວັນທີ 30 ກໍລະກົດ 2021 ຈັດກອງປະຊຸມຮ່ວມກັບຜູ້ຕາງໜ້າກະຊວງຍຸຕິທໍາ; ຫ້ອງການສໍານັກງານນາຍົກ ແລະ ກົມປະກັນຄຸນນະພາບການສຶກສາ, ກະຊວງສຶກສາທິການ ແລະ ກິລາ ເພື່ອທົບທວນ ແລະ ກວດຄືນທາງດ້ານໂຄງປະກອບຂອງດໍາລັດ;
11. ວັນທີ 25 ສິງຫາ 2021 ຈັດກອງປະຊຸມຂັ້ນວິຊາການ ເພື່ອຜ່ານຮ່າງເນື້ອໃນຂອງດໍາລັດເພື່ອຄວາມເປັນເອກະພາບ;

12. ວັນທີ 16 ພະຈິກ 2021 ຈັດກອງປະຊຸມຜ່ານຮ່າງດຳລັດ ຮູບແບບທາງໄກ ຊຶ່ງຈັດຂຶ້ນທີ່ຫ້ອງປະຊຸມ ຕຶກໄອຊີທີ ຊັ້ນ 4, ກະຊວງສຶກສາທິການ ແລະ ກິລາ ມີບັນດາກະຊວງ, ກົມທີ່ກ່ຽວຂ້ອງ ແລະ ສະຖານການສຶກສາ ເຂົ້າຮ່ວມຈຳນວນ 30 ທ່ານ;
13. ວັນທີ 9-12 ທັນວາ 2021 ຈັດກອງປະຊຸມຜ່ານຮ່າງເນື້ອໃນຂອງດຳລັດ ຢູ່ຫ້ອງປະຊຸມບ້ານພັກ ນາປ່າກວາງ, ເມືອງແກ້ວອຸດົມ, ແຂວງ ວຽງຈັນ ມີບັນດາກະຊວງ, ກົມທີ່ກ່ຽວຂ້ອງ ແລະ ສະຖານການສຶກສາຕ່າງໆ ເຂົ້າຮ່ວມຈຳນວນ 28 ທ່ານ;
14. ວັນທີ 20 ມັງກອນ 2022 ຄະນະຮັບຜິດຊອບສ້າງດຳລັດໄດ້ຈັດກອງປະຊຸມເພື່ອສັງລວມ ແລະ ປັບປຸງເນື້ອໃນ ຄືນຕາມມະຕິກອງປະຊຸມ ໃນຄັ້ງວັນທີ 9-12 ທັນວາ 2021;
15. ວັນທີ 3 ມີນາ 2022 ໄດ້ນຳເອົາຮ່າງເນື້ອໃນຂອງດຳລັດຜ່ານຢູ່ໃນກອງປະຊຸມຄະນະບໍລິຫານລັດສະໄໝສາມັນ ປະຈຳເດືອນ ກຸມພາ 2022;
16. ວັນທີ 14-15 ມີນາ 2022 ຈັດກອງປະຊຸມຮ່ວມກັບກະຊວງຍຸຕິທຳ, ຫ້ອງການສຳນັກງານນາຍົກລັດຖະມົນຕີ, ສະພາແຫ່ງຊາດ ແລະ ກົມປະກັນຄຸນນະພາບການສຶກສາ ກະຊວງສຶກສາທິການ ແລະ ກິລາ ເພື່ອທົບທວນໂຄງປະກອບ ແລະ ເນື້ອໃນຂອງດຳລັດ ຄືນໃໝ່ ກ່ອນຈະນຳສະເໜີກະຊວງຍຸຕິທຳ.

2. **ບັນຫາ ແລະ ຈຸດປະສົງ**

**2.1 ບັນຫາ**

1. ເຖິງວ່າວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໄດ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານກໍ່ສ້າງ-ພັດທະນາຊັບພະຍາກອນມະນຸດໃນໄລຍະໃໝ່, ທຽບໃສ່ການສຶກສາຂອງພາກພື້ນ ແລະ ສາກົນແລ້ວເຫັນວ່າ ສປປ ລາວ ພວກເຮົາຍັງບໍ່ສາມາດທຽບຄຽງກັບເພື່ອນບ້ານອາຊຽນ ແລະ ສາກົນ ໄດ້;
2. ການຄຸ້ມຄອງວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃນໄລຍະຜ່ານມາໄດ້ປະຕິບັດຕາມສັນຍາການຮ່ວມມືສອງຝ່າຍ ແລະ ຂໍ້ຕົກລົງ ວ່າດ້ວຍລະບຽບການຄຸ້ມຄອງນັກຮຽນ ນັກສຶກສາ ລາວ ໄປຮຽນຢູ່ຕ່າງປະເທດ. ຈາກສະພາບການຂອງໂລກໃນຂົງເຂດພາກພື້ນ ແລະ ສາກົນ ມີການປ່ຽນແປງໃໝ່ຮອບດ້ານ, ນະໂຍບາຍການຕ່າງປະເທດເປີດສູ່ໂລກພາຍນອກຢ່າງກວ້າງຂວາງ, ຂໍ້ມູນຂ່າວສານໄດ້ເຂົ້າເຖິງສັງຄົມ. ສະນັ້ນເຮັດໃຫ້ການຄຸ້ມຄອງວຽກງານທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ກໍ່ມີຜົນກະທົບໄປໃນທາງບວກ ແລະ ທາງລົບ;
3. ຍັງມີບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນອື່ນທີ່ບໍ່ກ່ຽວຂ້ອງ ໄດ້ຈັດຕັ້ງການໂຄສະນາເຜີຍແຜ່ທຶນການສຶກສາ, ໃຫ້ການບໍລິການດ້ານການສຶກສາຕ່າງປະເທດບໍ່ຖືກຕ້ອງ ແລະ ສອດຄ່ອງກັບລະບຽບການຂອງກະຊວງສຶກສາທິການ ແລະ ກິລາ, ເກີດມີກຸ່ມຄົນບໍ່ດີສວຍໂອກາດຕົວະຍົວະຫລອກລວງ, ຮຽກຮ້ອງຄ່າຕອບແທນ ແລະ ຄ່າບໍລິການເອກະສານນຳຜູ້ປົກຄອງ ແລະ ນັກຮຽນ-ນັກສຶກສາ. ເກີດມີການຮ້ອງຟ້ອງຈາກຜູ້ປົກຄອງ, ນັກສຶກສາ ແລະ ມັນຈຶ່ງເປັນເຫດໃຫ້ພາບພົດຂອງຂະແໜງການສຶກສາຂາດຄວາມເຊື່ອໝັ້ນ;
4. ຍັງມີບຸກຄົນ, ນິຕິບຸກຄົນ ສວຍໃຊ້ຊື່ສຽງຂອງອົງການຈັດຕັ້ງລັດໂດຍສະເພາະແມ່ນຂະແໜງການສຶກສາຫາຜົນປະໂຫຍດໃນທາງທີ່ບໍ່ຊອບທຳ;

5. ການດຳເນີນທຸລະກິດຂອງນິຕິບຸກຄົນ ດ້ານການບໍລິການທຶນການສຶກສາຕ່າງປະເທດ ແລະ ການຈັດສົ່ງນັກສຶກສາ ເຫັນວ່າບໍ່ຖືກຕ້ອງຕາມລະບຽບການ ຂອງກະຊວງສຶກສາທິການ ແລະ ກິລາ ເຮັດໃຫ້ມີຄວາມສ່ຽງສູງ ໃນການຄ້າມະນຸດ, ການຄ້າຂາຍແຮງງານເຖື່ອນ ແລະ ການເຄື່ອນໄຫວຮູບແບບອື່ນທີ່ສ້າງຄວາມບໍ່ສະຫງົບໃຫ້ແກ່ສັງຄົມ;
6. ເຖິງວ່າຂະແໜງການສຶກສາ ແລະ ກິລາ ຈະມີກົດໝາຍ, ລະບຽບການ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງຈຳນວນໜຶ່ງແລ້ວ ແຕ່ຍັງບໍ່ສາມາດຄຸ້ມຄອງວຽກງານຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໄດ້ດີເທົ່າທີ່ຄວນ ແລະ ເກີດມີປະກົດການຫຍໍ້ທໍ້ຂຶ້ນໃນສັງຄົມເຮັດໃຫ້ການຈັດຕັ້ງລັດເກີດມີຄວາມເຊື່ອມເສຍ.

ເພື່ອໃຫ້ການດຳເນີນວຽກງານມີປະສິດຕິຜົນ ແລະ ປະສິດທິພາບ ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ສ້າງດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານ.

**2.2 ຈຸດປະສົງ**

1. ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດແຫ່ງຊາດ, ແຜນພັດທະນາການສຶກສາ ແລະ ແຜນພັດທະນາຊັບພະຍາກອນມະນຸດ;
2. ເພື່ອເປັນການຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນໃນສັງຄົມກ່ຽວກັບການປະຕິບັດທຶນການສຶກສາຕ່າງປະເທດ;
3. ເພື່ອເຮັດໃຫ້ການຄຸ້ມຄອງວຽກງານການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເປັນລະບົບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເຮັດໃຫ້ການຄຸ້ມຄອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ສະຖານການສຶກສາທັງພາກລັດ ແລະ ເອກະຊົນ ໃຫ້ເປັນລະບົບຜ່ານປະຕູດຽວ;
4. ຈະເຮັດໃຫ້ຄູ່ຮ່ວມພັດທະນາ ແລະ ຜູ້ໃຫ້ທຶນການສຶກສາ ຮັບຮູ້ໄດ້ເຖິງຄວາມເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນ ຕໍ່ວຽກງານການສຶກສາຕ່າງປະເທດ ຂອງລັດຖະບານ ສປປ ລາວ;
5. ຮັບປະກັນການດຳເນີນການບໍລິການການສຶກສາຕ່າງປະເທດ ໃຫ້ຖືກຕ້ອງ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ**

**3.1 ທາງເລືອກທີ 1: ຮັກສາໄວ້ຕາມສະພາບປັດຈຸບັນ**

ໃນໄລຍະຜ່ານມາເຖິງແມ່ນວ່າຂະແໜງການສຶກສາ ແລະ ກິລາ ຈະມີນິຕິກຳຫຼາກຫຼາຍເປັນຕົ້ນ: ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ); ກົດໝາຍການສຶກສາຊັ້ນສູງ; ກົດໝາຍອາຊີວະສຶກສາ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງນັກຮຽນ-ນັກສຶກສາລາວໄປສຶກສາຢູ່ຕ່າງປະເທດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ແຕ່ການຄຸ້ມຄອງວຽກງານການສຶກສາຕ່າງປະເທດໃນໄລຍະຜ່ານມາເຫັນວ່າຍັງບໍ່ທັນຮັດກຸມ ແລະ ທົ່ວເຖິງ ຍັງເປັນຊ່ອງຫວ່າງໃຫ້ບຸກຄົນ, ນິຕິບຸກຄົນ, ສະຖານການສຶກສາ ແລະ ພາກສ່ວນອື່ນຍັງເຄື່ອນໄຫວໂຄສະນາເຜີຍແຜ່ທຶນການສຶກສາ ແລະ ໃຫ້ບໍລິການດ້ານການສຶກສາຕ່າງປະເທດຜ່ານສື່ອອນລາຍທີ່ບໍ່ຖືກຕາມກົດໝາຍ ແລະ ລະບຽບການ ຂອງກະຊວງສຶກສາທິການ ແລະ ກິລາ. ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຕົວຈິງພົບຂໍ້ຫຍຸ້ງຍາກ ແລະ ທ້າທາຍຫຼາຍດ້ານ ໂດຍສະເພາະການຄຸ້ມຄອງນັກຮຽນ-ນັກສຶກສາ, ນັກຄົ້ນຄວ້າ ແລະ ທຶນການສຶກສາຕ່າງປະເທດ. ການຮ່ວມມືດ້ານການສຶກສາກັບຕ່າງປະເທດຂອງບັນດາສະຖານການສຶກສາ, ບັນດາແຂວງ ແລະ ອົງການຈັດຕັ້ງອື່ນຂອງລາວຍັງບໍ່ທັນເປັນລະບົບຜ່ານປະຕູດຽວ, ຂາດການ

ປະສານງານ ເຮັດໃຫ້ການຈັດຕັ້ງປະຕິບັດມີລັກສະນະບໍ່ຕໍ່ເນື່ອງ ອາດຈະເຮັດໃຫ້ການພັດທະນາຊັບພະຍາກອນມະນຸດຢູ່ຕ່າງປະເທດບໍ່ມີຄຸນນະພາບ ແລະ ອາດຈະມີຜົນກະທົບໂດຍກົງຕໍ່ຂະແໜງການສຶກສາ ແລະ ກິລາ.

- **ຜົນດີ**

1. ເຮັດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນມີອິດສະຫຼະໃນການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ;
2. ນຳລາຍຮັບໃຫ້ບັນດາ ບຸກຄົນ, ນິຕິບຸກຄົນ ຈາກການບໍລິການທຶນການສຶກສາຕ່າງປະເທດ;
3. ເຮັດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນບໍ່ເສຍເວລາໃນການແລ່ນເອກະສານ ແລະ ການປະສານງານກັບກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

- **ຜົນເສຍ**

1. ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍຈະບໍ່ເຂັ້ມງວດ ແລະ ບໍ່ມີຄວາມສັກສິດ;
2. ຈັດຕັ້ງໂຄສະນາເຜີຍແຜ່ທຶນການສຶກສາໄປໃນທາງທີ່ບໍ່ຖືກຕ້ອງ, ຫາຜົນປະໂຫຍດໃຫ້ຕົນເອງ ເຊິ່ງຂັດກັບກົດໝາຍ, ລະບຽບການຂອງກະຊວງສຶກສາທິການ ແລະ ກິລາ ແລະ ຍັງມີບາງບໍລິສັດອອກທະບຽນດຳເນີນທຸລະກິດໃນຫົວຂໍ້ອື່ນທີ່ບໍ່ນອນຢູ່ໃນວຽກງານຂະແໜງການສຶກສາ ແລະ ກິລາ ແຕ່ໄດ້ແອບແຝງ ແລະ ເຄື່ອນໄຫວວຽກງານບໍລິການດ້ານການສຶກສາຕ່າງປະເທດ;
3. ໃຫ້ການບໍລິການໃຫ້ຂໍ້ມູນບໍ່ຈະແຈ້ງ, ມີກຸ່ມຄົນບໍ່ດີທີ່ສວຍໂອກາດຕົວະຍົວະຫລອກລວງ, ຮຽກຮ້ອງຄ່າຕອບແທນ ແລະ ຄ່າບໍລິການເອກະສານນຳຜູ້ປົກຄອງ, ນັກຮຽນ-ນັກສຶກສາ ເຮັດໃຫ້ສັງຄົມມີຄວາມວຸ້ນວາຍ;
4. ມີຄວາມສ່ຽງສູງຕໍ່ພົນລະເມືອງລາວ ເຊິ່ງລວມໄປເຖິງການຄ້າມະນຸດ, ການຄ້າຂາຍແຮງງານເຖື່ອນ, ການເຄື່ອນໄຫວຮູບແບບອື່ນທີ່ສ້າງຄວາມບໍ່ສະຫງົບໃຫ້ແກ່ສັງຄົມ;
5. ການພັດທະນາຊັບພະຍາກອນມະນຸດ ຂອງ ສປປ ລາວ ຈະບໍ່ສາມາດບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ລັດຖະບານກຳນົດໄວ້ຕາມຕົວຊີ້ບອກຕ່າງໆ;
6. ຈະເຮັດໃຫ້ວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ບໍ່ເປັນລະບົບຜ່ານປະຕູດຽວ ແລະ ສົ່ງຜົນກະທົບໃນການສ້າງຊັບພະຍາກອນມະນຸດໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

**3.2 ທາງເລືອກທີ 2: ວິທີແກ້ໄຂທີ່ບໍ່ແມ່ນນິຕິກຳ**

1. ຈະເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ບໍ່ເປັນເອກະພາບ ແລະ ຜ່ານປະຕູດຽວ;
2. ຈະບໍ່ສາມາດຜັນຂະຫຍາຍນິຕິກຳລຸ່ມກົດໝາຍທີ່ກຳນົດໄວ້ໃນກົດໝາຍການສຶກສາ ແລະ ບໍ່ສາມາດຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

- **ຜົນດີ**

1. ເຮັດໃຫ້ຜູ້ມີສິດ ແລະ ໜ້າທີ່ໃນການສ້າງນິຕິກຳ ບໍ່ໄດ້ສ້າງ ແລະ ປັບປຸງນິຕິກຳ;
2. ບໍ່ສິ້ນເປືອງງົບປະມານລັດໃນການພັດທະນາ, ໂຄສະນາເຜີຍແຜ່ ແລະ ຈັດພິມ.

- **ຜົນເສຍ**

1. ສະພາບບັນຫາຕ່າງໆທີ່ເກີດຂຶ້ນຈາກວຽກງານຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ບໍ່ໄດ້ຮັບການປັບປຸງ ແລະ ແກ້ໄຂ;
2. ນະໂຍບາຍຕ່າງໆຕໍ່ກັບການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ຈະບໍ່ໄດ້ກຳນົດລະອຽດ;
3. ນິຕິບຸກຄົນ ແລະ ອົງການຈັດຕັ້ງພາກລັດ ແລະ ເອກະຊົນ ຂາດມາດຕະການລວມ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຂອງຕົນ.

### 3.3 ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກຳ

ການສ້າງດຳລັດວ່າດ້ວຍວຽກງານຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ແມ່ນຜັນຂະຫຍາຍຈາກຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍລະບຽບຄຸ້ມຄອງນັກຮຽນ, ນັກສຶກສາ ລາວ ໄປສຶກສາຢູ່ຕ່າງປະເທດ ສະບັບເລກທີ 3552/ສສກ, ລົງວັນທີ 13 ສິງຫາ 2013 ແລະ ນິຕິກຳລຸ່ມກົດໝາຍທີ່ກຳນົດໄວ້ໃນກົດໝາຍການສຶກສາ ໃຫ້ມີຜົນສັກສິດ ແລະ ເປັນຮູບປະທຳ ເພື່ອເປັນເຄື່ອງມື ໂດຍມີຈຸດປະສົງ ເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວຽກງານຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເພື່ອໃຫ້ວຽກງານດັ່ງກ່າວສາມາດຈັດຕັ້ງປະຕິບັດໄດ້ ຢ່າງມີປະສິດທິພາບ, ມີປະສິດທິຜົນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເປັນລະບົບຜ່ານປະຕູດຽວ, ຖືກຕ້ອງ ແລະ ສອດຄ່ອງ ກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

- **ຜົນດີ**

1. ອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ, ຮັບປະກັນຜົນປະໂຫຍດອັນຊອບທຳຂອງຜູ້ໄປຮຽນ ແລະ ກັບຈາກຕ່າງປະເທດ;
2. ເຮັດໃຫ້ແຜນພັດທະນາຊັບພະຍາກອນມະນຸດ, ການຮ່ວມມື ແລະ ການຍາດແຍ່ງທຶນການສຶກສາກັບສາກົນໄດ້ຫຼາຍຂຶ້ນ;
3. ສາມາດກຳນົດບຸລິມະສິດໃນຂະແໜງການຕ່າງໆໄປຕາມແຜນຍຸດທະສາດ, ນະໂຍບາຍດ້ານການກໍ່ສ້າງຊັບພະຍາກອນມະນຸດວາງອອກ;
4. ຈະເປັນບາດກ້າວໜຶ່ງໃນການສະແດງເຖິງຜູ້ໃຫ້ທຶນການສຶກສາກໍ່ຄືຄູ່ຮ່ວມພັດທະນາ ແລະ ບັນດາປະເທດ ໃນຂົງເຂດ, ພາກພື້ນ ແລະ ສາກົນ ມີຄວາມຮັບຮູ້ເຂົ້າໃຈ ແລະ ເຫັນໄດ້ຄວາມເອົາໃຈໃສ່ຂອງ ລັດຖະບານ ສປປ ລາວ ຕໍ່ການສຶກສາຕ່າງປະເທດ;
5. ມີທຶນສະໜັບສະໜູນ ແລະ ສົ່ງເສີມທຶນການສຶກສາ ໄປໃນທາງທີ່ຖືກຕ້ອງ, ປອດໄພຕໍ່ພົນລະເມືອງລາວຕໍ່ຜູ້ໄດ້ຮັບທຶນການສຶກສາ, ເພື່ອຫຼຸດຜ່ອນການນຳໃຊ້ງົບປະມານລັດຖະບານເຂົ້າໃນການລົງທຶນການສຶກສາ;

6. ຈະເຮັດໃຫ້ວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເປັນລະບົບຜ່ານປະຕູດຽວ ຕອບສະໜອງແນວທາງນະໂຍບາຍຂອງພັກ ແລະ ລັດ ເຮັດໃຫ້ຂໍ້ມູນຂ່າວສານການສຶກສາມີການຂະຫຍາຍຕົວຢ່າງທົ່ວເຖິງແຕ່ສູນກາງລົງຮອດທ້ອງຖິ່ນ ຫຼຸດຜ່ອນຄວາມແຕກໂຕນລະຫວ່າງໂຕເມືອງ ແລະ ຊົນນະບົດ.

- **ຜົນເສຍ**

ຕ້ອງນໍາໃຊ້ງົບປະມານໃນການດໍາເນີນວຽກງານການ ສ້າງ ແລະ ພັດທະນາ ດໍາລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ.

**3.4 ການເລືອກເອົາວິທີສ້າງນິຕິກຳ**

**3.4.1 ເຫດຜົນການເລືອກເອົາວິທີການດັ່ງກ່າວ**

1. ການສ້າງດໍາລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ເປັນວິທີທີ່ດີທີ່ສຸດ ຖ້າທຽບໃສ່ທາງເລືອກວິທີທີ 1 ແລະ ທາງເລືອກວິທີທີ 2 ເນື່ອງຈາກວ່າດໍາລັດດັ່ງກ່າວຈະສາມາດແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມໄລຍະຜ່ານມາ ແລະ ທາງເລືອກນີ້ກໍ່ສອດຄ່ອງກັບນະໂຍບາຍຂອງພັກ-ລັດ, ສອດຄ່ອງກັບໜ້າທີ່ການເມືອງໃນຂະແໜງສຶກສາທິການ ແລະ ກິລາ;
2. ດໍາລັດສະບັບນີ້ຍັງມີກົນໄກຄຸ້ມຄອງແບບລວມສູນ, ສົ່ງເສີມຄວາມໂປ່ງໃສ, ກວດສອບໄດ້ ແລະ ສາມາດແກ້ໄຂປະກົດການຫຍໍ້ທໍ້ດ້ານການສຶກສາຕ່າງປະເທດ, ການຄ້າແຮງງານເຖື່ອນ ແລະ ເປັນບ່ອນອີງໃຫ້ແກ່ບັນດາກະຊວງ, ອົງການ, ນິຕິບຸກຄົນ ແລະ ສະຖານການສຶກສາພາກລັດ ແລະ ເອກະຊົນ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ;

ນິຕິກໍາຈະສ້າງໃໝ່ນີ້ນອນຢູ່ໃນປະເພດນິຕິກໍາທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກໍາບໍ່?

☑ ແມ່ນ ☐ ບໍ່ແມ່ນ

**3.4.2 ຜົນກະທົບທາງດ້ານການແຂ່ງຂັນດ້ານທຸລະກິດ**

ນິຕິກໍາທີ່ສະເໜີສ້າງ ຈະຈໍາກັດການຄຸ້ມຄອງທາງດ້ານທຸລະກິດໃນ ສປປ ລາວ ຫຼື ບໍ່?

☐ ຈໍາກັດ ☑ ບໍ່ຈໍາກັດ

**3.4.3 ພັນທະຕໍ່ສາກົນ**

ຮ່າງນິຕິກໍາ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼື ບໍ່ ?

☑ ແມ່ນ ☐ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະໃດ?

☐ WTO ☑ AEC ☐ FTA ☐ ອື່ນໆ

ຖ້າແມ່ນ, ຮ່າງນິຕິກໍາທີ່ສະເໜີສ້າງ ມີຄວາມສອດຄອງກັບພັນທະສາກົນນັ້ນ ຫຼື ບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

**3.4.4 ນິຕິກຳທີ່ພົວພັນ**

1. ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ74/ສພຊ, ລົງວັນທີ 18 ທັນວາ 2015;

2. ກົດໝາຍວ່າດ້ວຍການສຶກສາ ( ສະບັບປັບປຸງ ) ສະບັບເລກທີ 05/ສພຊ, ລົງວັນທີ 16 ກໍລະກົດ 2015;
3. ດຳລັດວ່າດ້ວຍການສຶກສາຊັ້ນສູງ ສະບັບເລກທີ 177/ລບ, ລົງວັນທີ 05 ມິຖຸນາ 2015;
4. ກົດໝາຍວ່າດ້ວຍອາຊີວະສຶກສາ ສະບັບເລກທີ 42/ສພຊ, ລົງວັນທີ 23 ທັນວາ 2013;
5. ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍລະບຽບການຄຸ້ມຄອງນັກຮຽນ-ນັກສຶກສາລາວໄປສຶກສາຢູ່ຕ່າງປະເທດ;

ຮ່າງນິຕິກຳທີ່ສະເໜີສ້າງໃໝ່ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼື ບໍ່

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

## 4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ

### 4.1 ສັງຄົມ

#### 4.1.1 ຜົນກະທົບ

- **ຜົນກະທົບທາງບວກ**

1. ເປັນເຄື່ອງມືໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ແລະ ການບໍລິຫານຄຸ້ມຄອງໃຫ້ເປັນເອກະພາບກັນໃນທົ່ວປະເທດ;
2. ຈະສ້າງເງື່ອນໄຂອັນດີໃຫ້ພົນລະເມືອງລາວໄດ້ຮັບຮູ້, ເຂົ້າໃຈເລິກເຊິ່ງກ່ຽວກັບຄວາມໝາຍຄວາມສຳຄັນຂອງວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໄດ້ຫຼາຍຂຶ້ນ;
3. ນັກຮຽນ-ນັກສຶກສາ ແລະ ນັກຄົ້ນຄວ້າ ຈະມີໂອກາດໄດ້ຮັບທຶນການສຶກສາທີ່ປອດໄພ, ບໍ່ມີຄວາມສ່ຽງໃນການຕົວະຍົວະຫຼອກລວງ;
4. ບຸກຄະລາກອນຂະແໜງການສຶກສາ ຈະໄດ້ຮັບການພັດທະນາຢ່າງເປັນລະບົບຕໍ່ເນື່ອງ ກ້າວສູ່ມາດຕະຖານສາກົນ;
5. ຜູ້ໃຫ້ການສະໜັບສະໜູນທຶນການສຶກສາຈະໄດ້ຮັບຜົນປະໂຫຍດກັບຄືນທາງກົງ ແລະ ທາງອ້ອມ;
6. ຮັບປະກັນໃນການຄຸ້ມຄອງ, ກວດກາ, ການຕິດຕາມ ວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ.

- **ຜົນກະທົບທາງລົບ**

ໃນເບື້ອງຕົ້ນບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ສະຖານການສຶກສາຈຳນວນໜຶ່ງ ອາດຈະຍັງສັບສົນ ແລະ ບໍ່ເຂົ້າໃຈແຈ້ງຕໍ່ການຈັດຕັ້ງ ແລະ ຄຸ້ມຄອງ ວຽກງານຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ.

#### 4.1.2 ເງື່ອນໄຂໃນການປະຕິບັດນິຕິກຳ

1. ດຳລັດສະບັບນີ້ ໄດ້ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ໃນວຽກງານການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ທີ່ກ່ຽວພັນກັບຫຼາຍພາກສ່ວນ ຕ້ອງໄດ້ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ;

2. ເມື່ອດຳລັດສະບັບນີ້ຖືກປະກາດໃຊ້ເປັນທາງການ ການເຜີຍແຜ່ ແລະ ຈັດຕັ້ງປະຕິບັດດຳລັດຕ້ອງໄດ້ຄົ້ນຄວ້າກ່ຽວກັບ: ຄຳແນະນຳການຈັດຕັ້ງປະຕິບັດດຳລັດ; ມາດຖານການຄັດເລືອກນັກສຶກສາໄປຮຽນຕ່າງປະເທດ ແລະ ຄູ່ມືແນະນຳການປະກອບເອກະສານໄປຮຽນ ແລະ ກັບຈາກຕ່າງປະເທດ;
3. ຈັດຕັ້ງເຜີຍແຜ່ເຊື່ອມຊຶມດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ບັນດາກະຊວງ, ອົງການ, ນິຕິບຸກຄົນ ແລະ ສະຖານການສຶກສາພາກລັດ ແລະ ເອກະຊົນ ແລະ ຜູ້ປົກຄອງ ເພື່ອຮັບຮູ້, ເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນຂອງດຳລັດດັ່ງກ່າວ.

- **ຄ່າໃຊ້ຈ່າຍ ເບື້ອງຕົ້ນ**

1. ຈັດພິມດຳລັດຈຳນວນ: 10.000 ຫົວ;
2. ລົງເຜີຍແຜ່ດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ບັນດາກະຊວງ, ອົງການ ແລະ ຢູ່ຕາມສະຖານການສຶກສາໃນຂອບເຂດທົ່ວປະເທດ.

- ຄ່າໃຊ້ຈ່າຍ ໃນແຕ່ລະປີ

(ບໍ່ມີ)

### 4.1.3 ການທາບທາມຄຳເຫັນ

ດຳລັດສະບັບນີ້ຄະນະຮັບຜິດຊອບໄດ້ລົງທາບທາມ ແລະ ຂໍຄຳເຫັນຈາກບັນດາພາກສ່ວນທີ່ກ່ຽວຂ້ອງ ຫຼາຍກວ່າ 100 ພາກສ່ວນ.

1. ໃນວັນທີ 24 ກຸມພາ 2020 ໄດ້ນຳເອົາຮ່າງດຳລັດດັ່ງກ່າວເຂົ້າທາບທາມຢູ່ໃນກອງປະຊຸມປະຈຳປີ 2019 ຂອງກົມກິດຈະການນັກສຶກສາທີ່ຈັດຂຶ້ນທີ່ຫ້ອງປະຊຸມ BTC, ບ້ານວຽງແກ້ວ, ເມືອງທຸລະຄົມ, ແຂວງວຽງຈັນ ມີຜູ້ແທນກອງປະຊຸມເຂົ້າຮ່ວມທັງໝົດ 95 ທ່ານ. ເຊິ່ງມາຈາກບັນດາກະຊວງທີ່ກ່ຽວຂ້ອງ, ບັນດາພະແນກສຶກສາທິການ ແລະ ກິລາ ແລະ ພະແນກການຕ່າງປະເທດ ແຂວງ,ນະຄອນຫຼວງ; ບັນດາກົມອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ ແລະ ມະຫາວິທະຍາໄລ 4 ແຫ່ງ;
2. ໃນລະຫວ່າງເດືອນ 3-4 ປີ 2021 ໄດ້ສົ່ງຮ່າງເນື້ອໃນຂອງດຳລັດໃຫ້ບັນດາກະຊວງ ແລະ ກົມທີ່ກ່ຽວຂ້ອງພາຍໃນກະຊວງສຶກສາທິການ ແລະ ກິລາ, ສະຖານການສຶກສາ ເພື່ອທາບທາມເປັນຮອບທີສອງ;
3. ຈັດກອງປະຊຸມຂັ້ນກົມ ແລະ ຂັ້ນວິຊາການ ເພື່ອຜ່ານໂຄງປະກອບ ແລະ ຮ່າງເນື້ອໃນຂອງດຳລັດຫຼາຍກວ່າ 13 ຄັ້ງ, ຈັດກອງປະຊຸມແບບເປີດກວ້າງຈຳນວນ 4 ຄັ້ງ ໃນຮູບແບບທາງໄກ ແລະ ເຊິ່ງໜ້າ; ໄດ້ນຳສະເໜີຜ່ານກອງປະຊຸມຄະນະບໍລິຫານລັດລະດັບກະຊວງ 2 ຄັ້ງ ແລະ ກອງປະຊຸມລັດຖະມົນຕີ ແລະ ຮອງລັດຖະມົນຕີ 1 ຄັ້ງ.
4. ໄດ້ຂໍທິດຊີ້ນຳ ແລະ ປຶກສາຫາລື ກັບຄະນະນຳຂອງກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການສ້າງດຳລັດເປັນປົກກະຕິ.

### 4.1.4 ສະຫຼຸບ

ຖ້າໜຶ່ງໃນຕົວຊີ້ວັດລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍ່ຖືວ່າ ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຕໍ່ສັງຄົມ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍ່ຮຽກຮ້ອງໃຫ້ເຮັດການວິເຄາະແບບລົງເລິກ ກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນຢ່າງກວ້າງຂວາງກັບຊຸມຊົນ.

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນຫຼາຍ/ທັງໝົດໄດ້ຮັບຜົນກະທົບ) | ☑ | ☐ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ 20 ສ່ວນຮ້ອຍ ຂອງຊຸມຊົນໄດ້ຮັບຜົນກະທົບ) | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ) (ຂໍ້ແນະນຳ-ຜົນກະທົບໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ) | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍຕໍ່ວິທີການດຳລົງຊີວິດຂອງບຸກຄົນ) | ☑ | ☐ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບ ລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☐ | ☑ | ☐ |

**4.2 ພາກທຸລະກິດ**

**4.2.1 ຜົນກະທົບ**

- **ຜົນກະທົບທາງບວກ**

ດຳລັດສະບັບນີ້ໄດ້ສ້າງຄວາມເຊື່ອໝັ້ນໃຫ້ບັນດາພາກທຸລະກິດໃນການພັດທະນາພື້ນຖານໂຄງລາງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.

- **ຜົນກະທົບທາງລົບ**

ດຳລັດສະບັບນີ້ບໍ່ມີຜົນກະທົບຕໍ່ພາກທຸລະກິດ.

**4.2.2 ເງື່ອນໄຂໃນການປະຕິບັດນິຕິກຳ**

ພາຍຫຼັງດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ສະບັບນີ້ໄດ້ປະກາດໃຊ້ ຄະນະຮັບຜິດຊອບຕ້ອງໄດ້ຂຶ້ນແຜນງົບປະມານ ເພື່ອລົງເຜີຍແຜ່ ແລະ ຝຶກອົບຮົມ ໃຫ້ແກ່ບັນດາກະຊວງ, ອົງການ, ສະຖານການສຶກສາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອໃຫ້ເຂົ້າໃຈຕໍ່ກັບການຈັດຕັ້ງປະຕິບັດດຳລັດດັ່ງກ່າວ.

**4.2.3 ການທາບທາມຄຳເຫັນ**

ເນື່ອງຈາກດຳລັດສະບັບນີ້ ຂອບເຂດນຳໃຊ້ສະເພາະໃນຂະແໜງການສຶກສາ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງສະນັ້ນ, ຈຶ່ງບໍ່ໄດ້ທາບທາມພາກສ່ວນພາກທຸລະກິດ.

### 4.2.4 ສະຫຼຸບ

ຖ້າໜຶ່ງໃນຕົວຊີ້ບອກຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍກໍຖືວ່າຮ່າງນິຕິກຳທີ່ສະເໜີສ້າງມີຜົນກະທົບຫຼາຍຕໍ່ພາກທຸລະກິດ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍ່ຮຽກຮ້ອງໃຫ້ເຮັດການວິເຄາະແບບລົງເລິກກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນຢ່າງກວ້າງຂວາງ ກັບພາກທຸລະກິດ.

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນອຸດສາຫະກຳທີ່ໄດ້ຮັບຜົນກະທົບ(ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ຂະແໜງອຸດສາຫະກຳ ໃຫຍ່/ທັງໝົດໄດ້ຮັບຜົນກະທົບ) | ☑ | ☐ | ☐ |
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ 30 ສ່ວນຮ້ອຍ ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20 ສ່ວນຮ້ອຍ ຂອງທຸລະກິດ ທີ່ຖືກຜົນກະທົບ) | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິ(ສະເລ່ຍ) (ຂໍ້ແນະນຳ-ຜົນກະທົບ ໝາຍເຖິງ ຫຼາຍກວ່າ 1.600.000 ກີບຕໍ່ຫົວໜ່ວຍທຸລະກິດ) | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການເຮັດທຸລະກິດ ທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍຕໍ່ວິທີການດຳເນີນທຸລະກິດ) | ☑ | ☐ | ☐ |
| ການບໍ່ເຫັນດີຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ (ຂໍ້ແນະນຳ-ຜົນກະທົບຫຼາຍໝາຍເຖິງການເຫັນດີເປັນເອກະພາບ ລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☑ | ☐ | ☐ |

## 4.3 ລັດຖະບານ

### 4.3.1 ຜົນກະທົບ

- **ຜົນກະທົບທາງບວກ**

ພາຍຫຼັງດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ຖືກຮັບຮອງ ແລະ ປະກາດໃຊ້ເປັນທາງການແລ້ວຈະກາຍເປັນເຄື່ອງມືທີ່ສຳຄັນຕົ້ນຕໍໃຫ້ແກ່ລັດຖະບານ ໂດຍສະເພາະແມ່ນຂະແໜງການສຶກສາທິການ ແລະ ກິລາ ໃນການຄຸ້ມຄອງວຽກງານກິດຈະການນັກສຶກສາ ແກ້ໄຂປະກົດການຫຍໍ້ທໍ້ ແລະ ທາງລົບທີ່ເກີດຂຶ້ນໃນສັງຄົມ, ເປັນທ່າແຮງສຳຄັນໃນການຄຸ້ມຄອງເຂົ້າສູ່ລະບຽບຫຼັກການຢ່າງເປັນລະບົບຜ່ານປະຕູດຽວ

ແລະ ເປັນບ່ອນອີງໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ກະຊວງ, ອົງການ, ສະຖານການສຶກສາທາງພາກລັດ ແລະ ເອກະຊົນ ທົ່ວປະເທດໃນການຈັດຕັ້ງປະຕິບັດ.

- **ຜົນກະທົບທາງລົບ**

ດຳລັດສະບັບນີ້ເປັນດຳລັດທີ່ສ້າງຂຶ້ນມາໃໝ່ມີບາງພາກສ່ວນອາດຍັງບໍ່ເຂົ້າໃຈເທົ່າທີ່ຄວນຕໍ່ການນຳໃຊ້ ແລະ ຈັດຕັ້ງປະຕິບັດ ຈຳເປັນຕ້ອງໄດ້ຂຶ້ນແຜນງົບປະມານ ເພື່ອລົງເຜີຍແຜ່ວຽກງານດັ່ງກ່າວໃຫ້ພາກສ່ວນກ່ຽວຂ້ອງຢ່າງທົ່ວເຖິງ.

### 4.3.2 ເງື່ອນໄຂໃນການຈັດຕັ້ງປະຕິບັດນິຕິກຳ

1. ຈັດພິມປຶ້ມດຳລັດວ່າດ້ວຍການຄຸ້ມທຶນຄອງການສຶກສາຕ່າງປະເທດ ແລະ ຜູ້ຮຽນ;
2. ລົງເຜີຍແຜ່ເນື້ອໃນຂອງດຳລັດໃຫ້ແກ່ບັນດາກະຊວງ, ອົງການ, ສະຖານການສຶກສາພາກລັດ ແລະ ເອກະຊົນ ແລະ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ;
3. ສ້າງຄວາມເຊື່ອໝັ້ນໃນລະບົບການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາການ.

- ຄ່າໃຊ້ຈ່າຍເບື້ອງຕົ້ນ: ນຳໃຊ້ງົບປະມານລັດເຂົ້າໃນການປະຕິບັດກິດຈະກຳໃນຂະບວນການສ້າງນິຕິກຳເທົ່າທີ່ຂຶ້ນແຜນໄວ້.
- ຄ່າໃຊ້ຈ່າຍແຕ່ລະປີ: ປະຕິບັດຕາມແຜນງົບປະມານທີ່ທາງລັດຖະບານມອບໃຫ້ຂະແໜງການສຶກສາທິການ ແລະ ກິລາ.

### 4.3.3 ການທາບທາມຄຳເຫັນ

ການສ້າງດຳລັດແມ່ນໄດ້ປະຕິບັດຕາມນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງການສ້າງນິຕິກຳ ໂດຍໄດ້ຈັດກອງປະຊຸມທາບທາມຄຳເຫັນຈາກບັນດາກະຊວງທີ່ກ່ຽວຂ້ອງ, ບັນດາພະແນກສຶກສາທິການ ແລະ ກິລາ ແລະ ພະແນກການຕ່າງປະເທດ ແຂວງ,ນະຄອນຫຼວງ; ບັນດາກົມອ້ອມຂ້າງກະຊວງສຶກສາທິການ ແລະ ກິລາ ແລະ ສະຖານການສຶກສາທີ່ກ່ຽວຂ້ອງຈຳນວນ ສອງ ຄັ້ງ ມີຜູ້ເຂົ້າຮ່ວມຫຼາຍກວ່າ 100 ພາກສ່ວນ.

### 4.3.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູງກາງ, ແຂວງ, ເມືອງ ແລະ ບ້ານ) (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ) | ☐ | ☑ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ (ຂໍ້ແນະນຳ - ຜົນກະທົບຫຼາຍໝາຍເຖິງ ຫຼາຍກວ່າ 20 ສ່ວນຮ້ອຍ ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ຂັ້ນສູນກາງ, ພະແນກການຢູ່ຂັ້ນແຂວງ) | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນ | ☑ | ☐ | ☐ |

| | | | |
|---|---|---|---|
| ການຄຸ້ມຄອງບໍລິຫານລັດ (ສະເລ່ຍ) (ຂໍ້ແນະນຳ-ຜົນກະທົບ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ) | | | |
| ລະດັບການປ່ຽນແປງຕໍ່ການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ) | ☑ | ☐ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ (ຂໍ້ແນະນຳ-ຜົນກະທົບຫຼາຍ ໝາຍເຖິງການເຫັນດີເປັນເອກະພາບ ລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☑ | ☐ | ☐ |

## 5 ການຈັດຕັ້ງປະຕິບັດນິຕິກຳ

### 5.1 ການສະໜັບສະໜູນ ແກ່ບຸກຄົນ

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ໄດ້ຮັບຜົນດີ ກະຊວງສຶກສາທິການ ແລະ ກິລາ ຈະອອກນິຕິກຳລຸ່ມດຳລັດ ໃຫ້ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

### 5.2 ການສະໜັບສະໜູນແກ່ພາກທຸລະກິດ

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການຄຸ້ມຄອງທຶນການສຶກສາຕ່າງປະເທດ ແລະ ຜູ້ຮຽນ ໃຫ້ໄດ້ຮັບຜົນດີນັ້ນລັດຖະບານ ຫຼື ຂະແໜງການສຶກສາ ຕ້ອງໂຄສະນາເຜີຍແຜ່ດຳລັດສະບັບນີ້ໃຫ້ແກ່ພາກທຸລະກິດຮັບຮູ້ ແລະ ເຂົ້າໃຈ ຕໍ່ການນຳໃຊ້ດຳລັດດັ່ງກ່າວ.

### 5.3 ແຜນການຈັດຕັ້ງປະຕິບັດ

ຈັດຕັ້ງເຜີຍແຜ່ດຳລັດ ສະບັບນີ້ ໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງສາກົນ, ສະຖານການສຶກສາພາກລັດ ແລະ ເອກະຊົນ, ນັກຮຽນ, ນັກສຶກສາ ແລະ ນັກຄົ້ນຄວ້າ ຮັບຮູ້, ເຂົ້າໃຈ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

### 5.4 ງົບປະມານ ແລະ ແຫຼ່ງທຶນ

ງົບປະມານຮັບໃຊ້ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ນຳໃຊ້ງົບປະມານຂອງລັດຖະບານ.

### 5.5 ທົບທວນຄືນ

ພາຍຫຼັງທີ່ດຳລັດວ່າດ້ວຍການຄຸ້ມຄອງການສຶກສາຕ່າງປະເທດ ແລະ ຜູ້ຮຽນ ສະບັບນີ້ມີຜົນສັກສິດນຳໃຊ້ ກະຊວງສຶກສາທິການ ແລະ ກິລາ ຕ້ອງເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການ, ສະຖານການສຶກສາ ແລະ ພາກສວນທີ່ກ່ຽວຂ້ອງທົບທວນຄືນຜົນຂອງການຈັດຕັ້ງປະຕິບັດດຳລັດສະບັບນີ້ລວມທັງນິຕິກຳທີ່ກ່ຽວຂ້ອງ ເພື່ອປັບປຸງແກ້ໄຂບັນຫາທີ່ເຫັນວ່າບໍ່ສອດຄ່ອງ.

## 6 ການອະນຸມັດ

1. □ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ ຫຼື
2. □ ເຊັນບົດປະເມີນຜົນກະທົບຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີ ຫາອົງການຮັບຜິດຊອບກວດກາມີຄຳເຫັນຕໍ່ບົດປະເມີນຜົນ.

ນະຄອນຫຼວງວຽງຈັນ, ວັນທີ      ມີນາ 2022

**ຫົວໜ້າຄະນະຮັບຜິດຊອບ**